Australian Government

Department of Home Affairs

# Privacy notice

# ການແຈ້ງຄວາມເປັນສ່ວນຕົວ

Form

1442i LAO

LAOTIAN

Department of Home Affairs (ກະຊວງພາຍໃນ) (ກະຊວງ) ລວມເອົາ Australian Border Force (ກອງກຳລັງປ້ອງກັນຊາຍແດນອອສເຕຣເລັຍ).

*Privacy Act 1988 (ປະມວນກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ ປີ1988)* ກຳນົດໃຫ້ ກະຊວງແຈ້ງໃຫ້ບຸກຄົນຊາບກ່ຽວກັບເລື້ອງບາງເລື້ອງເມື່ອເກັບກຳຂໍ້ມູນສ່ວນຕົວຂອງພວກເຂົາ.

ກະຊວງດັ່ງກ່າວໄດ້ເຜີຍແຜ່ Privacy Policy (ນະໂຍບາຍຄວາມເປັນສ່ວນຕົວ), ເຊິ່ງປະກອບດ້ວຍ ຂໍ້ມູນກ່ຽວກັບແນວທາງໃນການປະຕິບັດຕາມ Australian Privacy Principles (ຫຼັກການ ຄວາມເປັນສ່ວນຕົວຂອງອອສເຕຣເລັຍ) ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ ແລະ ໂດຍສະເພາະ, ຂໍ້ມູນກ່ຽວກັບ:

- ພວກເຮົາເກັບກຳຂໍ້ມູນສ່ວນຕົວກ່ຽວກັບທ່ານແບບໃດ ແລະ ເປັນຫຍັງ
- ວິທີທີ່ທ່ານອາດຈະເຂົ້າເຖິງຂໍ້ມູນສ່ວນຕົວກ່ຽວກັບຕົວທ່ານທີ່ກະຊວງເກັບເອົາໄວ້
- ວິທີທີ່ທ່ານສາມາດຊອກຫາການແກ້ໄຂຂໍ້ມູນດັ່ງກ່າວ
- ວິທີທີ່ທ່ານຈະຮ້ອງຮຽນກ່ຽວກັບການລະເມີດ Australian Privacy Principles ແລະ ວິທີທີ່ກະຊວງຈັດການກັບການຮ້ອງຮຽນດັ່ງກ່າວ.

ນະໂຍບາຍຄວາມເປັນສ່ວນຕົວສາມາດຫາພົບໄດ້ທີ່:
**https://www.homeaffairs.gov.au/access-and-accountability/our-commitments/privacy**

ເພີ້ມເຕີມຈາກນັ້ນ, ຫຼາຍໆແບບຟອມຂອງພວກເຮົາທີ່ ທ່ານອາດຈະຕ້ອງຂຽນຕື່ມ ຊຶ່ງກ່ຽວຂ້ອງ ກັບຈຸດປະສົງສະເພາະ, ມີການແຈ້ງການສະເພາະກ່ຽວ ການເກັບກຳຂໍ້ມູນສ່ວນຕົວຂອງທ່ານແລະສິ່ງ ທີ່ພວກເຮົາເຮັດກັບຂໍ້ມູນນັ້ນ. ນອກຈາກນີ້ ທ່ານອາດຈະໄດ້ຮັບການແຈ້ງບອກດ້ວຍການເກັບກຳ ສະເພາະໃນເວລາທີ່ ທ່ານໃຊ້ບໍລິການ ຫຼືໃຫ້ຂໍ້ມູນສ່ວນຕົວຂອງທ່ານກັບກະຊວງ.

Privacy Notice ນີ້ (ປະກາດຄວາມເປັນສ່ວນຕົວ) ອະທິບາຍການເກັບກຳຂໍ້ມູນສ່ວນຕົວຂອງ ກະຊວງ, ແລະ ເປັນສ່ວນເສີມເນື້ອໃນຂອງປະກາດສະເພາະເຫຼົ່ານັ້ນ (ໃນກໍລະນີທີ່ກ່ຽວຂ້ອງ).

## ກະຊວງ - ພວກເຮົາແມ່ນໃຜ / ພວກເຮົາເຮັດຫຍັງ

ກະຊວງມີຄວາມຮັບຜິດຊອບໃນເລື້ອງຄົນເຂົ້າອອກເມືອງ ແລະ ການເຄື່ອນຍ້າຍ (ລວມທັງຄວາມ ປອດໄພຊາຍແດນ, ການເຂົ້າ, ພັກເຊົາ ແລະ ການຈັດການ ເລື້ອງການເດີນທາງອອກນອກປະເທດ ຂອງຜູ້ທີ່ບໍ່ແມ່ນພົນລະເມືອງ); ການຄວບຄຸມດ່ານພາສີ ແລະ ດ່ານຊາຍແດນ (ນອກເໜືອຈາກການ ກັກກັນ ແລະ ກວດກາ); ສັນຊາດ; ກິດຈະການຊົນເຜົ່າ; ນະໂຍບາຍ ແລະ ການປະຕິບັດງານດ້ານການ ບັງຄັບໃຊ້ກົດໝາຍ; ນະໂຍບາຍແລະການດຳເນີນງານດ້ານຄວາມໝັ້ນຄົງຂອງຊາດ; ກິດຈະການນາໆ ວັດທະນະທຳ; ນະໂຍບາຍ ແລະ ການປະສານງານດ້ານຄວາມໝັ້ນຄົງປອດໄພ; ການບໍລິການດ້ານການ ຮັກສາຄວາມປອດໄພຢູ່ສະຖານທີ່ຣາຊການຂອງຣັດຖະບານກາງ ແລະ ສະຖານທີ່ທາງການທູດ ແລະ ກົງສຸນ ໃນອອສເຕຣເລັຍ; ຄວາມປອງດອງຂອງສັງຄົມ; ຄວາມປອດໄພດ້ານການຂົນສົ່ງ; ນະໂຍບາຍ ແລະ ການປະສານງານດ້ານຄວາມປອດໄພທາງໄຊເບີຣ໌; ອາດຊະຍາກຳທາງໄຊເບີຣ໌; ການ ຄຸ້ມຄອງ ແລະ ການປະສານງານກ່ຽວກັບໂຄງລ່າງພື້ນຖານທີ່ສຳຄັນ; ຄວາມປອດໄພໃນການຂົນສົ່ງ; ການປະສານງານນະໂຍບາຍດ້ານໄຊເບີ; ການປະສານງານດ້ານການປົກປ້ອງພື້ນຖານໂຄງລ່າງທີ່ສຳຄັນ; ການຈັດການເຫດສຸກເສີນຂອງ ເຄືອຈັກກະພົບ; ການກຽມການຕັ້ງຖິ່ນຖານຂອງຜູ້ຍ້າຍຖິ່ນຖານແລະ ການເຂົ້າມາດ້ານມະນຸດສະທຳ; ການສຶກສາຂອງຜູ້ຍ້າຍຖິ່ນຖານທີ່ເປັນຜູ້ໃຫຍ່; ນະໂຍບາຍການບັນເທົາ ທຸກ, ການຟື້ນຟູແລະການຫຼຸດຜ່ອນອັນຕະລາຍທັງໝົດແລະການຊ່ວຍເຫຼືອທາງດ້ານການເງິນ.

## ລາຍລະອຽດການຕິດຕໍ່

ລາຍລະອຽດການຕິດຕໍ່ທີ່ຄົບຖ້ວນສາມາດຊອກພົບໄດ້ຢູ່ໃນເວັບໄຊທ໌ ຂອງ ກະຊວງ ທີ່ **www.homeaffairs.gov.au**

ຖ້າຫາກທ່ານເຊື່ອວ່າທ່ານມີຂໍ້ຮ້ອງຮຽນ ຫຼື ຄວາມຄິດເຫັນກ່ຽວກັບການເກັບກຳ ຫຼື ການຈັດການ ຂໍ້ມູນສ່ວນຕົວຂອງທ່ານ:

- ຕື່ມແບບຟອມຄຳຕິຊົມທາງອອນໄລນ໌ທີ່ **www.homeaffairs.gov.au/feedback** ຫຼື
- ຂຽນໄປຫາ: The Manager
  Global Feedback Unit
  GPO Box 241
  Melbourne VIC 3001
  Australia

## ການເກັບກຳຂໍ້ມູນສ່ວນຕົວ

### ຂໍ້ມູນສ່ວນຕົວແມ່ນຫຍັງ?

ປະມວນກົດໝາຍວ່າດ້ວຍຄວາມເປັນສ່ວນຕົວກຳນົດວ່າຂໍ້ມູນສ່ວນຕົວ ເປັນຂໍ້ມູນ ຫຼື ຄວາມຄິດເຫັນ ກ່ຽວກັບບຸກຄົນທີ່ສາມາດລະບຸຕົວຕົນໄດ້ຢ່າງ ສົມເຫດສົມຜົນ (ບໍ່ວ່າຈະເປັນຄວາມຈິງ ຫຼື ຖືກບັນທຶກໄວ້ໃນຮູບແບບ ເອກະສານ ຫຼືບໍ່ກໍຕາມ).

ພວກເຮົາຍັງເກັບກຳຂໍ້ມູນທີ່ລະອຽດອ່ອນຊຶ່ງເປັນສ່ວນຍ່ອຍຂອງຂໍ້ມູນ ສ່ວນຕົວທີ່ກຳນົດໄວ້ໃນ ປະມວນກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ ວ່າເປັນຂໍ້ມູນ ຫຼື ຄວາມຄິດເຫັນ, ຊຶ່ງ ເປັນຂໍ້ມູນ ສ່ວນຕົວ, ກ່ຽວກັບເຊື້ອຊາດ ຫຼື ຊົນເຜົ່າຂອງບຸກຄົນ, ຄວາມຄິດເຫັນທາງດ້ານການເມືອງ, ການເປັນສະມາຊິກຂອງສະມາຄົມທາງດ້ານການເມືອງ, ຄວາມເຊື່ອຖື ຫຼື ກ່ຽວຂ້ອງກັບສາສະໜາ, ຄວາມເຊື່ອທາງປັດຊະຍາ, ການເປັນສະມາຊິກຂອງສະມາຄົມວິຊາຊີບ ຫຼື ການຄ້າ, ການເປັນສະມາຊິກ ຂອງສະຫະພັນການຄ້າ, ທັດສະນະທາງເພດ ຫຼື ການປະຕິບັດ, ແລະ ປະຫວັດຄະດີອາຍາ. ຂໍ້ມູນທີ່ລະອຽດອ່ອນຍັງຮວມເຖິງຂໍ້ມູນດ້ານສຸຂະພາບແລະຂໍ້ມູນທາງພັນທຸກຳກ່ຽວກັບບຸກຄົນ ແລະ ຂໍ້ມູນຊີວະມາດບາງຢ່າງ. ຂໍ້ມູນທາງດ້ານຊີວະມາດປະກອບມີສຳເນົາເອເລັກໂທຣນິກ ຂອງໃບໜ້າ, ລາຍນິ້ວມື, ມ່ານຕາ, ຝາມື, ລາຍເຊັນ ຫຼື ສຽງຂອງທ່ານ.

ກົດໝາຍທີ່ນຳໃຊ້ກັບກະຊວງຍັງປົກປ້ອງຂໍ້ມູນບາງປະເພດໂດຍ ສະເພາະທີ່ອາດຈະເປັນຂໍ້ມູນສ່ວນຕົວ ເຊັ່ນ: ຕົວລະບຸຕົວຕົນ (ຕາມທີ່ໄດ້ກຳນົດໄວ້ໃນ *Migration Act 1958 (ປະມວນ ກົດໝາຍວ່າ ດ້ວຍການຍ້າຍຖິ່ນຖານ ປີ 1958)* ແລະ *Australian Citizenship Act 2007 (ປະມວນກົດໝາຍວ່າດ້ວຍການເປັນ ພົນລະເມືອງອອສເຕຣເລັຍ ປີ 2007)*), ແລະຂໍ້ມູນການກວດ ຄົນເຂົ້າອອກເມືອງ ແລະການປົກປ້ອງຊາຍແດນ (ຕາມທີ່ໄດ້ກຳນົດໄວ້ໃນ *Australian Border Force Act 2015 (ປະມວນກົດໝາຍວ່າດ້ວຍການປົກປ້ອງຊາຍແດນ ປີ 2015)*), ແລະສິ່ງອື່ນໆ.

ສຳລັບຂໍ້ມູນເພີ່ມເຕີມທີ່ກ່ຽວຂ້ອງກັບຕົວລະບຸສ່ວນບຸກຄົນໂດຍສະເພາະ, ຈົ່ງເບິ່ງແບບຟອມ 1243i ຕົວລະບຸສ່ວນຕົວຂອງທ່ານໄດ້ທີ່
**https://immi.homeaffairs.gov.au/form-listing/forms/1243i.pdf**

### ພວກເຮົາຈະເກັບກຳຂໍ້ມູນສ່ວນຕົວຂອງທ່ານມາຈາກໃຜ?

ໃນກໍລະນີສ່ວນໃຫຍ່, ພວກເຮົາຈະເກັບກຳຂໍ້ມູນສ່ວນຕົວ ຂອງທ່ານ ໂດຍກົງຈາກທ່ານຫຼືຜູ້ທີ່ທ່ານ ອະນຸຍາດ (ຕົວຢ່າງ, ຕົວແທນຫຼືທ່ານໝໍ ຂອງທ່ານ). ພວກເຮົາຍັງເກັບກຳຂໍ້ມູນສ່ວນຕົວຂອງທ່ານ ຜ່ານ ພື້ນທີ່ທາງອອນລາຍນ໌ ImmiAccount ແລະ VEVO ຂອງພວກເຮົາອີກດ້ວຍ.

ໃນບາງກໍລະນີ, ມັນອາດຈະຖືກລວບລວມຈາກທ່ານຜ່ານລະບົບອັດຕະໂນມັດ. ຕົວຢ່າງ, ພວກເຮົາໃຊ້ລະບົບ SmartGate ຢູ່ສະໜາມບິນນານາຊາດທີ່ເກັບກຳຂໍ້ມູນສ່ວນຕົວຂອງທ່ານ (ເຊັ່ນ: ຮູບໃບໜ້າ) ຈາກທ່ານ.

ນອກຈາກນີ້ ພວກເຮົາຍັງເກັບກຳຂໍ້ມູນສ່ວນຕົວຂອງທ່ານ ຈາກບັນດາ ລັດຖະບານອອສເຕຣເລັຍ ແລະ ລັດຖະບານປະຈຳລັດ ຫຼື ອານາເຂດ (ໂດຍສະເພາະອົງການບັງຄັບໃຊ້ກົດໝາຍ) ແລະ ລັດຖະບານ ຕ່າງປະເທດພາຍໃຕ້ກົດໝາຍຕ່າງໆຂອງອອສເຕຣເລັຍ ຫຼື ຂໍ້ຕົກລົງພາຍໃນ ຫຼື ສາກົນ ຫຼາຍສະບັບ.

© COMMONWEALTH OF AUSTRALIA, 2026

ພວກເຮົາຍັງເກັບກຳຂໍ້ມູນ Single Touch Payroll (STP) ຂອງທ່ານຈາກຫ້ອງການພາສີອາກອນອອສເຕຣເລັຍ (ATO) ເພື່ອເສີມສ້າງຄວາມໜ້າເຊື່ອຖືຂອງໂຄງການວີຊາທັກສະແຮງງານຊົ່ວຄາວ (Temporary Skilled Visa Program).

ນອກນີ້ ຂໍ້ມູນສ່ວນຕົວຍັງຖືກເກັບກຳແລະນຳໃຊ້ໃນນາມຂອງພວກເຮົາ ໂດຍຜູ້ໃຫ້ບໍລິການຕາມສັນຍາ. ຕົວຢ່າງລວມມີ ການບໍລິການຊ່ວຍເຫຼືອຜູ້ຖືກຄຸມຂັງທີ່ເຮັດຜິດກົດໝາຍເຂົ້າ ເມືອງ, ການບໍລິການທາງການແພດ, ການຈັດຫາໂຄງການ Adult Migrant English Program (ໂຄງການພາສາອັງກິດສຳລັບຜູ້ຍ້າຍຖິ່ນຖານສຳລັບຜູ້ໃຫຍ່) (AMEP) ແລະ ກຸ່ມສະໜັບສະໜູນໃນຊຸມຊົນທີ່ກ່ຽວຂ້ອງກັບ Community Refugee Integration and Settlement Program (ໂຄງການການຮວມກັນເປັນໜຶ່ງດຽວ ແລະ ການຕັ້ງຖິ່ນຖານຂອງຜູ້ລີ້ໄພ) (CRISP). ກະຊວງຮຽກຮ້ອງໃຫ້ຜູ້ຮັບ ເໝົາທັງໝົດຂອງກະຊວງປະຕິບັດຕາມກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ ບໍ່ວ່າຈະຢູ່ໃນອອສເຕຣເລັຍ ຫຼື ຕ່າງປະເທດ.

ນອກນີ້ ພວກເຮົາຍັງອາດຈະເກັບກຳຂໍ້ມູນ ສ່ວນຕົວກ່ຽວກັບທ່ານທີ່ມີຢູ່ໃນສື່ສິ່ງພິມ ແລະສື່ດິຈິຕອລສາທາລະນະ.

ການປ່ຽນແປງສະຖານະຄວາມສຳພັນຂອງທ່ານ ຫຼື ການກ່າວຫາເລື່ອງຄວາມຮຸນແຮງໃນຄອບຄົວ (DFV) ອາດສົ່ງຜົນໃຫ້ເກີດການປ່ຽນແປງວິທີການທີ່ພວກເຮົາຈັດການກັບຂໍ້ມູນສ່ວນຕົວຂອງທ່ານ.

### ການເກັບກຳຂໍ້ມູນສ່ວນຕົວຂອງທ່ານທີ່ຕ້ອງການຫຼືໄດ້ຮັບອະນຸຍາດຕາມ ກົດໝາຍ

ກະຊວງມີໜ້າທີ່ ແລະ ອຳນາດທີ່ຫຼາກຫຼາຍກ່ຽວກັບການເກັບກຳ, ການນຳໃຊ້ ແລະ ການເປີດເຜີຍຂໍ້ມູນສ່ວນຕົວ ຊຶ່ງສ່ວນຫຼາຍແມ່ນໄດ້ກຳນົດໄວ້ໃນກົດໝາຍສະເພາະຂອງເຄືອຈັກກະພົບ. ນອກຈາກນັ້ນ, ການເກັບກຳຂໍ້ມູນສ່ວນຕົວຂອງກະຊວງແມ່ນປະຕິບັດຕາມປະມວນກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ.

ຂ້າງລຸ່ມນີ້ແມ່ນໂຄງຮ່າງຂອງກົດໝາຍທີ່ໂດທົ່ວໄປ ພວກເຮົາໃຊ້ ເກັບກຳຂໍ້ມູນສ່ວນບຸກຄົນ.

*ປະມວນກົດໝາຍວ່າດ້ວຍການຍ້າຍຖິ່ນຖານ ປີ 1958* (ປະມວນກົດໝາຍວ່າດ້ວຍການຍ້າຍຖິ່ນຖານ)

ພວກເຮົາໄດ້ຮັບອະນຸຍາດພາຍໃຕ້ປະມວນກົດໝາຍວ່າດ້ວຍການຍ້າຍ ຖິ່ນຖານເພື່ອ ເກັບກຳຂໍ້ມູນສ່ວນຕົວ, ແລະໃນບາງກໍລະນີ ຕົວລະບຸຕົວຕົນສ່ວນຕົວ (ເຊັ່ນ: ລາຍນິ້ວມື ຫຼື ລາຍມື, ຮູບຖ່າຍໃບໜ້າຂອງຜູ້ກ່ຽວ ຫຼື ລາຍເຊັນ, ທີ່ລວມຢູ່ໃນສິ່ງອື່ນໆ). ຕົວຢ່າງ, ສິ່ງເຫຼົ່ານີ້ອາດຈະຖືກເກັບກຳ:

- ສຳລັບຈຸດປະສົງການຍື່ນຂໍວີຊາ
- ໃນການພົວພັນກັບອຳນາດການກວດຄົ້ນ ແລະ ການຍຶດເອົາພາຍໃຕ້ປະມວນກົດໝາຍວ່າດ້ວຍການຍ້າຍຖິ່ນຖານ ຫຼື
- ເມື່ອບຸກຄົນໃດນຶ່ງເຂົ້າມາ ຫຼື ອອກຈາກອອສເຕຣເລັຍ (ຕົວຢ່າງ: ພາດສະປອດ ຫຼື ວີຊ່າ ຫຼື ຫຼັກຖານສະແດງຕົວຕົນ).

*Australian Citizenship Act 2007 (ປະມວນກົດໝາຍວ່າດ້ວຍການເປັນພົນລະເມືອງອອສເຕຣເລັຍ ປີ 2007)*

ພວກເຮົາໄດ້ຮັບອະນຸຍາດພາຍໃຕ້ປະມວນກົດໝາຍວ່າດ້ວຍການ ເປັນສັນຊາດ ໃຫ້ເກັບກຳຂໍ້ມູນສ່ວນຕົວ (ລວມທັງຕົວລະບຸຕົວຕົນ) ເພື່ອໃຫ້ໝັ້ນໃຈວ່າບຸກຄົນໃດໜຶ່ງໄດ້ມີ ຄຸນນະສົມບັດ ຕົງຕາມຂໍ້ກຳນົດການເປັນພົນລະເມືອງ.

*Immigration (Guardianship of Children) Act 1946 (ປະມວນກົດໝາຍວ່າດ້ວຍການເຂົ້າອອກເມືອງ (ການເປັນຜູ້ປົກຄອງເດັກ) ປີ1946)* (the IGOC Act)

ພາຍໃຕ້ກົດໝາຍ IGOC, ແລະກົດລະບຽບຂໍ້ບັງຄັບ, ລັດຖະມົນຕຣີເປັນຜູ້ປົກຄອງຂອງເດັກນ້ອຍທີ່ບໍ່ແມ່ນພົນລະເມືອງທີ່ ເດີນທາງມາໃນອອສເຕຣເລັຍໂດຍບໍ່ມີພໍ່ແມ່ ຫຼືຍາດພີ່ນ້ອງທີ່ມີອາຍຸ 21ປີຂຶ້ນໄປ (ທີ່ຮູ້ຈັກກັນໃນນາມ ຜູ້ເຍົາ IGOC). ເພື່ອຊ່ວຍໃນການປະຕິບັດຕາມຄວາມຮັບຜິດຊອບຂອງຜູ້ປົກຄອງ, ປະມວນ ກົດໝາຍ IGOC ອະນຸຍາດໃຫ້ລັດຖະມົນຕຣີມອບອຳນາດ ແລະ ໜ້າທີ່ຜູ້ປົກຄອງໃຫ້ແກ່ເຈົ້າໜ້າທີ່ໃນລັດຖະບານອອສເຕຣເລັຍ ຫຼື ຣັດ/ອານາເຂດ (ເອີ້ນວ່າ 'ຕົວແທນ ຂອງ IGOC'). ບຸກຄົນ ຫຼື ອົງການ ຈັດຕັ້ງທີ່ເຕັມໃຈ ແລະເໝາະສົມຍັງສາມາດແຕ່ງຕັ້ງໃນຖານະ 'ຜູ້ດູແລ' ຂອງ ຜູ້ເຍົາ IGOC ໄດ້. ໂດຍທົ່ວໄປແລ້ວ, ຜູ້ດູແລຈະຕ້ອງໃຫ້ສະຫວັດດີການ ແລະ ການດູແລເດັກທີ່ຢູ່ໃນການດູແລຂອງພວກເຂົາ. ເພື່ອຮັບປະກັນສະຫວັດດີການ ແລະການດູແລເດັກພາຍໃຕ້ປະມວນກົດໝາຍ IGOC, ກະຊວງຈະເກັບກຳຂໍ້ມູນສ່ວນຕົວກ່ຽວກັບ ຜູ້ເຍົາ IGOC ແລະຜູ້ປົກຄອງຂອງພວກເຂົາ. ເມື່ອມີຄວາມຈຳເປັນ ແລະ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ, ກະຊວງອາດຈະເປີດເຜີຍຂໍ້ມູນສ່ວນຕົວໃຫ້ ແລະເກັບກຳຂໍ້ມູນຈາກ, ອຳນາດການປົກຄອງຂອງຣັດ/ອານາເຂດ ລວມທັງອົງການສະຫວັດດີການເດັກ, ຜູ້ແທນ IGOC, ຜູ້ເບິ່ງແຍງດູແລ, ພໍ່ແມ່, ຜູ້ເບິ່ງແຍງ, ຍາດພີ່ນ້ອງ ແລະອົງການຂອງລັດຖະບານອອສເຕຣເລັຍອື່ນໆ.

*Customs Act 1901* (Customs Act) and *Excise Act 1901 (ປະມວນກົດໝາຍວ່າດ້ວຍພາສີ ປີ 1901* (ປະມວນກົດໝາຍວ່າດ້ວຍພາສີ) ແລະ *ປະມວນກົດໝາຍພາສີອາກອນ 1901)* (ປະມວນກົດໝາຍ ວ່າດ້ວຍພາສີ)

ກະຊວງເກັບກຳຂໍ້ມູນສ່ວນຕົວຫຼາຍຢ່າງພາຍໃຕ້ປະມວນກົດໝາຍພາສີ ແລະ ປະມວນກົດໝາຍວ່າດ້ວຍພາສີອາກອນ ໃນໜ້າທີ່ຂອງພວກເຮົາໃນການປົກປ້ອງຊາຍແດນອອສເຕຣເລັຍ ແລະ ຮັບປະກັນການເກັບລາຍໄດ້ຈາກຊາຍແດນ. ອັນນີ້ລວມເຖິງຂໍ້ມູນທີ່ກ່ຽວຂ້ອງ ກັບຜູ້ໂດຍສານຂາເຂົ້າແລະລູກເຮືອຂອງເຮືອແລະເຮືອບິນ.

*Maritime Powers Act 2013 (ປະມວນກົດໝາຍວ່າດ້ວຍອຳນາດທາງທະເລ ປີ 2013)* (ປະມວນກົດໝາຍ ວ່າດ້ວຍອຳນາດທາງທະເລ)

ພວກເຮົາໄດ້ຮັບອະນຸຍາດພາຍໃຕ້ປະມວນກົດໝາຍວ່າດ້ວຍອຳນາດ ທາງທະເລ ໃຫ້ເກັບກຳຂໍ້ມູນສ່ວນຕົວໃນການໃຊ້ອຳນາດທາງທະເລ. ອຳນາດດັ່ງກ່າວສະໜັບສະໜູນການບັງຄັບໃຊ້ກົດໝາຍກ່ຽວຂ້ອງກັບການເດີນທະເລຂອງອອສເຕຣເລັຍ, ໃນນັ້ນມີການພົວພັນກັບການປະມົງຕ່າງປະເທດທີ່ຜິດກົດໝາຍ, ພາສີ, ການຕໍ່ຕ້ານການກໍ່ການຮ້າຍທາງທະເລ, ການຍົກຍ້າຍຖິ່ນຖານ, ການກັກກັນ ແລະ ການຄ້າຢາເສບຕິດ, ພ້ອມທັງຂໍ້ຕົກລົງສາກົນ ແລະ ການຈັດການລະຫວ່າງປະເທດໃນທະເລ.

*Immigration (Education) Act 1971 (ປະມວນກົດໝາຍ ຄົນເຂົ້າເມືອງ (ການສຶກສາ) ປີ 1971)* (ປະມວນກົດໝາຍຄົນເຂົ້າເມືອງ (ການສຶກສາ)

ພວກເຮົາແລະຜູ້ໃຫ້ບໍລິການ AMEP ໃນນາມຂອງກະຊວງ ໄດ້ຮັບອະນຸຍາດໃຫ້ເກັບກຳຂໍ້ມູນສ່ວນບຸກຄົນຫຼາຍປະເພດເພື່ອໃຫ້ມີ ຄວາມພໍໃຈວ່າບຸກຄົນໃດໜຶ່ງມີຄຸນສົມບັດຕົງຕາມເງື່ອນໄຂ ການມີສິດໄດ້ຮັບ AMEP ພາຍໃຕ້ປະມວນກົດໝາຍວ່າດ້ວຍ ຄົນເຂົ້າເມືອງ (ການສຶກສາ).

### ການເກັບກຳຂໍ້ມູນສ່ວນຕົວຂອງທ່ານພາຍໃຕ້ປະມວນກົດໝາຍ ວ່າດ້ວຍຄວາມເປັນສ່ວນຕົວ

ປະມວນກົດໝາຍວ່າດ້ວຍຄວາມເປັນສ່ວນຕົວຮັບຮູ້ວ່າຂໍ້ມູນສ່ວນຕົວ (ລວມທັງຂໍ້ມູນທີ່ລະອຽດອ່ອນ) ອາດຈະຖືກເກັບກຳໂດຍທາງກະຊວງພາຍໃຕ້ກົດໝາຍຂອງອອສເຕຣເລັຍ – ຕົວຢ່າງດັ່ງທີ່ກ່າວຢູ່ຂ້າງເທິງ.

ປະມວນກົດໝາຍວ່າດ້ວຍຄວາມເປັນສ່ວນຕົວຍັງອະນຸຍາດໃຫ້ດ້ວຍວ່າຂໍ້ມູນສ່ວນຕົວ ທີ່ ນອກເໜືອໄປຈາກຂໍ້ມູນທີ່ລະອຽດອ່ອນ ສາມາດເກັບກຳໄດ້ ຖ້າຂໍ້ມູນນັ້ນມີຄວາມຈຳເປັນຢ່າງສົມເຫດສົມຜົນ ຫຼື ກ່ຽວຂ້ອງໂດຍກົງກັບໜຶ່ງ ຫຼື ຫຼາຍກວ່າ ໃນໜ້າທີ່ ຫຼື ກິດຈະກຳຂອງກະຊວງ.

ກ່ຽວກັບການເກັບກຳຂໍ້ມູນທີ່ລະອຽດອ່ອນ, ປະມວນກົດໝາຍວ່າດ້ວຍຄວາມ ເປັນສ່ວນຕົວອະນຸຍາດໃຫ້ກະຊວງເກັບກຳຂໍ້ມູນລະອຽດອ່ອນ ໃນບາງສະຖານະການ ລວມທັງ:

- ຖ້າວ່າທ່ານຍິນຍອມເຫັນດີແລະຂໍ້ມູນແມ່ນມີຄວາມຈຳເປັນຕາມສົມຄວນ ຫຼື ກ່ຽວຂ້ອງໂດຍກົງກັບໜຶ່ງ ຫຼື ຫຼາຍກວ່າໃນໜ້າທີ່ ຫຼື ກິດຈະກຳຂອງກະຊວງ
- ຫຼື ການເກັບລວບລວມແມ່ນມີຄວາມຈຳເປັນ ຕາມສົມຄວນ ຫຼື ກ່ຽວຂ້ອງໂດຍກົງກັບ, ໜຶ່ງຫຼືຫຼາຍກິດຈະກຳທີ່ກ່ຽວຂ້ອງກັບການບັງຄັບໃຊ້ຂອງພວກເຮົາ.

### ຈຸດປະສົງທີ່ພວກເຮົາເກັບກຳຂໍ້ມູນສ່ວນຕົວຂອງທ່ານ

ໜ້າທີ່ແລະກິດຈະກຳຂອງພວກເຮົາແມ່ນກວ້າງຫຼາຍ ກວມເອົາໜ້າທີ່ເຊິ່ງລະບຸໄວ້ຢູ່ໃນພາກສ່ວນ 'ກະຊວງ - ພວກເຮົາແມ່ນໃຜ / ພວກເຮົາເຮັດຫຍັງ' ທີ່ຢູ່ຂ້າງເທິງ ແລະ ຂໍ້ມູນເພີ່ມເຕີມໂດຍຜ່ານທາງເລືອກ 'ກ່ຽວກັບພວກເຮົາ' ຢູ່ໃນເວັບໄຊທ໌ຂອງກະຊວງ ທີ່ **Who we are (homeaffairs.gov.au)**.

ມັນເປັນໄປບໍ່ໄດ້ທີ່ຈະບອກຈຸດປະສົງສະເພາະທັງໝົດທີ່ພວກເຮົາເກັບກຳຂໍ້ມູນສ່ວນຕົວ, ແຕ່ສິ່ງເຫຼົ່ານີ້ລວມມີຈຸດປະສົງຕໍ່ໄປນີ້:

- ວີຊ່າ ແລະ ການຍ້າຍຖິ່ນຖານ ລວມທັງການປະຕິບັດຕາມເງື່ອນໄຂຂອງວີຊາ
- ພາສີ, ພາສີສິນຄ້າ ແລະ ພາສີອາກອນ
- ຊາວອົບພະຍົບແລະການຊ່ວຍເຫຼືອດ້ານມະນຸດສະທຳ
- ການບໍລິການການຕັ້ງຖິ່ນຖານ
- ໂຄງການພາສາອັງກິດສຳລັບຜູ້ຍ້າຍຖິ່ນຖານຜູ້ໃຫຍ່
- ການຈັດການຊາຍແດນ
- ສະຖານະຄົນເຂົ້າເມືອງ ຫຼື ການຖືກຄຸມຂັງ
- ການເປັນສັນຊາດ
- ການບັງຄັບໃຊ້ກົດໝາຍ
- ຄວາມໝັ້ນຄົງແຫ່ງຊາດ


© COMMONWEALTH OF AUSTRALIA, 2026

- ຄວາມປອດໄພດ້ານການຂົນສົ່ງ ລວມເຖິງຄວາມປອດໄພໃນເດີ່ນຍົນ ແລະ ທາງທະເລ ຕະຫຼອດ ຈົນການບໍລິຫານການເຂົ້າເຖິງພື້ນທີ່
- ການຈັດການເຫດສຸກເສີນຂອງ ເຄືອຈັກກະພົບ
- ການຈ້າງງານພະນັກງານຂອງກະຊວງ

ຂໍ້ມູນສ່ວນຕົວຂອງທ່ານຈະຖືກໃຊ້ເພື່ອຈຸດປະສົງຫຼັກຂອງການເກັບກຳ ຫຼື ເພື່ອຈຸດປະສົງຮອງ ທີ່ອະນຸຍາດໂດຍປະມວນກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ ຫຼື ອະນຸຍາດເປັນຢ່າງອື່ນໂດຍ ກົດໝາຍ.

### ປັນຍາປະດິດ (Artificial Intelligence)

ເນື່ອງຈາກກະຊວງມີການນຳເອົາປັນຍາປະດິດ (AI) ມາໃຊ້ ລວມທັງ Generative AI, ການວິເຄາະ ຂໍ້ມູນຂັ້ນສູງ, ລະບົບອັດຕະໂນມັດ ແລະ ລະບົບການຕັດສິນໃຈແບບອັດຕະໂນມັດ (ADM) ເພື່ອ ສະໜັບສະໜູນການດຳເນີນງານ, ການບໍລິຫານຈັດການຄວາມສ່ຽງ ແລະ ວຽກງານດ້ານບໍລິຫານ ຈັດການ, ຂໍ້ມູນສ່ວນຕົວຂອງທ່ານອາດຈະຖືກນຳມາປະມວນຜົນໂດຍນຳໃຊ້ເຕັກໂນໂລຊີ AI. ກິດຈະກຳເຫຼົ່ານີ້ອາດລວມເຖິງສິ່ງທີ່ໄດ້ລະບຸໄວ້ໃນແຈ້ງການກ່ຽວກັບຄວາມເປັນສ່ວນຕົວສະບັບນີ້.

ທາງກະຊວງຈະນຳໃຊ້ສະເພາະຜະລິດຕະພັນ AI ທີ່ໄດ້ຮັບການອະນຸມັດ ແລະ ຜ່ານການປະເມີນແລ້ວ ວ່າເໝາະສົມກັບສະພາບແວດລ້ອມທີ່ມີຄວາມປອດໄພຂອງກະຊວງເທົ່ານັ້ນ.

ອາດມີການນຳ ເຄື່ອງມື Generative AI ລະດັບອົງກອນມາໃຊ້ເພື່ອເພີ້ມປະສິດທິພາບໃນການ ເຮັດວຽກໃນກິດຈະກຳຕ່າງໆຂອງກະຊວງສຳລັບກໍລະນີການນຳໃຊ້ທີ່ໄດ້ຮັບການອະນຸມັດ ເຊັ່ນ:

- ສະຫຼຸບຂໍ້ມູນທີ່ທ່ານໃຫ້ໄວ້
- ສະຫຼຸບຂໍ້ມູນທີ່ໄດ້ຮັບຈາກພາກສ່ວນທີສາມ
- ຈັດທຳບົດລາຍງານ
- ດຳເນີນການຄົ້ນຄວ້າ ແລະ ວິເຄາະ
- ຈັດທຳເອກະສານຕິດຕໍ່ສື່ສານ
- ສະໜັບສະໜູນປະສິດທິພາບການເຮັດວຽກ

ໃນກໍລະນີທີ່ມີການນຳໃຊ້ AI, ພະນັກງານຂອງກະຊວງຈະກວດສອບຜົນຮັບທີ່ໄດ້ຈາກ AI ເພື່ອ ໃຫ້ແນ່ໃຈວ່າມີຄວາມຖືກຕ້ອງ, ຖືກຕ້ອງກັບສະພາບການປັດຈຸບັນ, ຄວາມຄົບຖ້ວນ ແລະ ຄວາມ ເໝາະສົມ ກ່ອນທີ່ຈະນຳໄປໃຊ້ ຫຼື ເປີດເຜີຍຂໍ້ມູນດັ່ງກ່າວ, ລວມທັງການນຳໄປໃຊ້ໃນການຕັດສິນໃຈ.

ໃນການປະມວນຜົນຂໍ້ມູນສ່ວນຕົວຂອງທ່ານດ້ວຍ AI, ກະຊວງຈະດຳເນີນການຕາມ ກົດໝາຍວ່າ ດ້ວຍຄວາມເປັນສ່ວນຕົວ ຫຼື ຕາມທີ່ໄດ້ຮັບອະນຸຍາດຈາກກົດໝາຍທີ່ກ່ຽວຂ້ອງເທົ່ານັ້ນ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບວິທີການທີ່ກະຊວງນຳໃຊ້ເຕັກໂນໂລຊີ AI, ກະລຸນາເບິ່ງຄຳຖະແຫຼງການ ຄວາມໂປ່ງໃສໃນການໃຊ້ AI ຂອງພວກເຮົາໄດ້ທີ່ **https://www.homeaffairs.gov.au/access-and-accountability/our-commitments/plans-and-charters/our-service-charters/ai-transparency-statement**

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການນຳໃຊ້ AI ແລະ ການຈັດການຂໍ້ມູນສ່ວນຕົວຂອງທ່ານ, ກະລຸນາ ເບິ່ງນະໂຍບາຍຄວາມເປັນສ່ວນຕົວຂອງພວກເຮົາ **https://www.homeaffairs.gov.au/access-and-accountability/our-commitments/privacy**

### ຜົນທີ່ຕາມມາຖ້າຫາກວ່າກະຊວງບໍ່ໄດ້ເກັບກຳຂໍ້ມູນສ່ວນຕົວຂອງທ່ານ

ຖ້າຂໍ້ມູນສ່ວນຕົວຂອງທ່ານບໍ່ໄດ້ຖືກເກັບກຳ, ພວກເຮົາອາດຈະບໍ່ສາມາດດຳເນີນການກັບໃບສະໝັກ ຂອງທ່ານໄດ້ (ເຊັ່ນວ່າໃບສະໝັກຂໍວີຊ່າຂອງທ່ານ), ບໍ່ສາມາດ ກຳນົດສິດຂອງທ່ານສຳລັບການ ບໍລິການຂອງພວກເຮົາ, ຫຼືປະຕິບັດຕາມພາລະຕາມກົດໝາຍຂອງພວກເຮົາ, ພັນທະໃນການດູແລ ຫຼື ພັນທະຜູກພັນສາກົນລະຫວ່າງປະເທດຂອງອອສເຕຣເລັຍ. ອັນນີ້ອາດສົ່ງຜົນໃຫ້ທ່ານຖືກປະຕິເສດ ການເຂົ້າປະເທດອອສເຕຣເລັຍ ໃບສະໝັກຖືກປະຕິເສດ ຫຼື ບໍ່ມີສິດໄດ້ຮັບການບໍລິການຕ່າງໆ (ໃນບັນດາສິ່ງອື່ນໆ).

## ການເປີດເຜີຍຂໍ້ມູນສ່ວນຕົວ

ຂໍ້ມູນສ່ວນຕົວທີ່ພວກເຮົາເກັບກຳເພື່ອຈຸດປະ ສົງຂອງໜ້າທີ່ ແລະກິດຈະກຳ ຂອງພວກເຮົາອາດຈະ ຖືກເປີດເຜີຍ ໃຫ້ພາກສ່ວນທີສາມແລະ ອົງການຈັດຕັ້ງຂອງລັດຖະບານອື່ນໆ ພາຍໃຕ້ຫຼາຍໆ ສະຖານະການ ໂດຍອີງຕາມປະມວນກົດໝາຍວ່າດ້ວຍ ຄວາມເປັນສ່ວນຕົວ. ຂ້າງລຸ່ມນີ້ແມ່ນປະເພດ ທີ່ພົບເລື້ອຍທີ່ສຸດ.

### ການເປີດເຜີຍຕໍ່ຜູ້ຕາງໜ້າທີ່ ຖືກແຕ່ງຕັ້ງ

ທ່ານອາດຈະແຕ່ງຕັ້ງຜູ້ທີ່ພວກເຮົາອາດຈະເປີດເຜີຍຂໍ້ມູນສ່ວນຕົວຂອງທ່ານເຊັ່ນ: ສະມາຊິກ ຄອບຄົວ, ຕົວແທນການຍ້າຍຖິ່ນຖານ, ນາຍໜ້າພາສີ, ຜູ້ສະໜັບສະໜູນຫຼືທະນາຍຄວາມທີ່ເປັນ ຕົວແທນຂອງທ່ານ.

### ການເປີດເຜີຍທີ່ໄດ້ຮັບອະນຸຍາດ

ໃນບາງກໍລະນີ, ພວກເຮົາໄດ້ຮັບອະນຸຍາດ ຫຼື ອະນຸຍາດ ພາຍໃຕ້ກົດໝາຍຂອງອອສເຕຣເລັຍ ໃຫ້ເປີດເຜີຍຂໍ້ມູນສ່ວນຕົວ, ລວມທັງກັບໜ່ວຍງານອື່ນໆໃນລັດຖະບານອອສເຕຣເລັຍ ແລະ ທັງຂອງ ຣັດ ແລະ ອານາເຂດ.

ຂໍ້ກຳນົດການເປີດເຜີຍທີ່ສຳຄັນທີ່ສຸດໃນກົດ ໝາຍຕຳແໜ່ງໜ້າທີ່ຂອງກະຊວງ ແມ່ນພາກ 4A ຂອງປະມວນກົດໝາຍວ່າດ້ວຍການເຄື່ອນຍ້າຍຖິ່ນຖານ, ໝວດ 43 ຂອງປະມວນກົດ ໝາຍວ່າດ້ວຍ ການເປັນພົນລະເມືອງແລະພາກທີ 6 ຂອງ *Australian Border Force Act 2015*.

ຕົວຢ່າງຕ່າງໆລວມມີການເປີດເຜີຍເພື່ອຊ່ວຍໃນການຢືນຢັນຕົວຕົນ ຂອງທ່ານ, ການກວດສອບ ຄວາມຖືກຕ້ອງຂອງເອກະສານທີ່ທ່ານໄດ້ເອົາໃຫ້ພວກ ເຮົາຫຼືໜ່ວຍງານອື່ນ, ຫຼື ເພື່ອດຳເນີນການຈັບ ຄູ່ຂໍ້ມູນຫຼືການຊ່ວຍເຫຼືອໜ່ວຍງານເພື່ອການປະຕິ ບັດຕາມກົດລະບຽບຂອງຕົນເອງຫຼືໜ້າທີ່ຕາມກົດ ໝາຍອື່ນໆ.

### ເປີດເຜີຍຕໍ່ໜ່ວຍງານລັດຖະບານອື່ນໆ

ໜ່ວຍງານລັດຖະບານທີ່ກະຊວງ ອາດຈະເປີດເຜີຍຂໍ້ມູນສ່ວນຕົວ ລວມ ເອົາແຕ່ບໍ່ຈຳກັດແຕ່ພຽງເທົ່ານີ້:

- ການບໍລິການອອສເຕຣເລັຍ (Services Australia), ສຳລັບຈຸດປະສົງຂອງປະມວນກົດ ໝາຍຕ່າງໆເຊັ່ນ: *Social Security Act 1991 (ປະມວນກົດໝາຍວ່າດ້ວຍປະກັນສັງຄົມ ປີ1991), Child Support (Assessment) Act 1989 (ປະມວນກົດໝາຍວ່າດ້ວຍ ການຊ່ວຍເຫຼືອເດັກ (ການປະເມີນ) ປີ1989)* ແລະ *Child Support (Registration and Collection) Act 1988 (ປະມວນກົດໝາຍວ່າດ້ວຍການຊ່ວຍເຫຼືອເດັກ (ການລົງ ທະບຽນແລະການເກັບກຳ) ປີ1988, (Health Insurance Act 1973) (ປະມວນກົດໝາຍວ່າດ້ວຍປະກັນສຸຂະພາບປີ 1973)* ແລະ *Taxation Administration Act 1953 (ປະມວນກົດໝາຍວ່າດ້ວຍການບໍລິຫານພາສີ ປີ 1953)*
- ກະຊວງບໍລິການສັງຄົມ
- ກະຊວງ ກະສິກຳ ການປະມົງ ແລະ ປ່າໄມ້, ເພື່ອບໍລິຫານລະບົບຄວາມປອດໄພທາງຊີວະພາບຂອງ ອອສເຕຣເລັຍ ແລະ ເພື່ອຈຸດປະສົງຂອງປະມວນກົດໝາຍເຊັ່ນ: *Biosecurity Act 2015, Export Control Act 2020, Imported Food Control Act 1992 (ປະມວນກົດໝາຍວ່າດ້ວຍຄວາມປອດໄພທາງຊີວະພາບ ປີ 2015, ກົດ ໝາຍວ່າດ້ວຍການ ຄວບຄຸມການສົ່ງອອກ ປີ 2020, ກົດໝາຍວ່າດ້ວຍການຄວບຄຸມອາຫານທີ່ນຳເຂົ້າ ປີ1992)* ແລະ *Illegal Logging Prohibition Act 2012 (ປະມວນກົດໝາຍວ່າດ້ວຍການ ຫ້າມຕັດໄມ້ຜິດກົດໝາຍ ປີ 2012)*
- ຄະນະບໍລິຫານ ສິນຄ້າບຳບັດ, ສຳລັບຈຸດປະສົງຂອງ *Therapeutic Goods Act 1989 (ປະມວນກົດໝາຍວ່າດ້ວຍ ສິນຄ້າບຳບັດ ປີ1989)*
- ພະແນກຄຸ້ມຄອງຄວາມສົມບູນຊື່ສັດດ້ານກິລາແຫ່ງອອສເຕຣເລັຍ, ສຳລັບຈຸດປະສົງຂອງ ໂຄງການຕ້ານການໃຊ້ຢາເສີມກຳລັງແຫ່ງຊາດ
- ກະຊວງ ສຶກສາ, ສຳລັບຈຸດປະສົງຂອງປະມວນກົດໝາຍຕ່າງໆເຊັ່ນ: *Education Services for Overseas Students Act 2000 (ປະມວນກົດ ໝາຍວ່າດ້ວຍ ການບໍລິການການ ສຶກສາສຳລັບນັກສຶກສາຕ່າງປະເທດ ປີ 2000)*
- ກະຊວງການຈ້າງງານແລະການພົວພັນບ່ອນເຮັດວຽກ, ເພື່ອຈຸດປະສົງຂອງປະມວນກົດໝາຍຕ່າງໆ ເຊັ່ນ *Work Health and Safety Act 2011 (ປະມວນກົດໝາຍວ່າດ້ວຍສຸຂະພາບແລະ ຄວາມປອດໄພຂອງການເຮັດວຽກ ປີ 2011)*, ຂໍ້ມູນຈະກົງກັບຂໍ້ມູນກ່ຽວກັບການບໍລິການການ ຈ້າງງານແລະ ກຳນົດຜົນກະທົບໃດໆຂອງອົງປະກອບບ່ອນເຮັດວຽກທີ່ສະເໜີຕໍ່ຕະຫຼາດແຮງງານ ຂອງອອສເຕຣເລັຍ; ແລະ ເພື່ອຈຸດປະສົງທີ່ກ່ຽວຂ້ອງກັບການພັດທະນາໂຄງການ ແລະຄວາມຄິດລິເລີ່ມການຮັບປະກັນທັກສະຂອງ ອອສເຕຣເລັຍ ແລະ ນະໂຍບາຍທີ່ກ່ຽວຂ້ອງ ກັບການຈັດຊື້ຈັດຈ້າງ
- ກະຊວງກິດຈະການນັກຮົບເກົ່າ, ເພື່ອຈຸດປະສົງຂອງປະມວນກົດໝາຍເຊັ່ນ: *Veterans' Entitlements Act 1986 (ປະມວນກົດໝາຍວ່າດ້ວຍສິດທິຂອງນັກຮົບເກົ່າ ປີ1986)*

© COMMONWEALTH OF AUSTRALIA, 2026

- ຫ້ອງການ ພາສີອາກອນ ຂອງ ອອສເຕຣເລັຍ, ເພື່ອຈຸດປະສົງຂອງປະມວນກົດໝາຍ *Income Tax Assessment Act 1997 (ປະມວນກົດໝາຍການປະເມີນພາສີລາຍໄດ້ ປີ1997)* ແລະ ກົດໝາຍພາສີອາກອນອື່ນໆ
- ກະຊວງການຕ່າງປະເທດ ແລະ ການຄ້າ, ເພື່ອຈຸດປະສົງຂອງປະມວນກົດໝາຍຕ່າງໆເຊັ່ນ: *Australian Passports Act 2005 (ປະມວນກົດໝາຍວ່າດ້ວຍໜັງສືເດີນທາງອອສເຕຣເລັຍ ປີ 2005)* ແລະ ເພື່ອໃຫ້ໄດ້ຂໍ້ມູນປະເທດສຳລັບການດຳເນີນວີຊ່າຄຸ້ມຄອງ ແລະ ໃນເລື້ອງໜັງສືເດີນທາງຕ່າງ ປະເທດໃດໆກໍຕາມທີ່ທ່ານອາດມີສິດຖືໃນຖານະຜູ້ຖືສັນຊາດຄູ່.
- ກະຊວງປ້ອງກັນປະເທດ, ເພື່ອການບໍລິຫານໂຄງການວີຊ່ານັກສຶກສາຂະແໜງປ້ອງກັນປະເທດ ແລະເພື່ອຈຸດປະສົງຂອງ *Defence Trade Controls Act 2012 (ປະມວນກົດໝາຍວ່າດ້ວຍການຄວບຄຸມການຄ້າປ້ອງກັນປະເທດ ປີ 2012)*
- ກະຊວງຄຸ້ມຄອງຄວາມສົມບູນຂອງກົດໝາຍ, ເພື່ອຈຸດປະສົງຂອງກົດໝາຍເຊັ່ນ: *Criminal Code Act 1995 (ປະມວນກົດໝາຍອາຍາ ປີ1995)*
- ກະຊວງຄຸ້ມຄອງການປ່ຽນແປງສະພາບ ພູມອາກາດ, ພະລັງງານ, ສິ່ງແວດລ້ອມ ແລະ ນໍ້າ, ເພື່ອຈຸດປະສົງຂອງປະມວນກົດໝາຍຕ່າງໆ ເຊັ່ນ: *Environment Protection and Biodiversity Conservation Act 1999, Ozone Protection and Synthetic Greenhouse Gas Management Act 1989, Hazardous Waste (Regulation of Exports and Imports) Act 1989 (ປະມວນກົດໝາຍວ່າດ້ວຍການປົກປ້ອງສິ່ງແວດລ້ອມ ແລະ ອະນຸລັກຊີວະນາໆພັນ ປີ1999, ກົດໝາຍວ່າດ້ວຍການປົກປ້ອງໂອໂຊນ ແລະ ກ໊າສເຮືອນແກ້ວສັງເຄາະ ປີ 1989, ກົດໝາຍວ່າດ້ວຍສິ່ງເສດເຫຼືອອັນຕະລາຍ (ກົດລະບຽບການສົ່ງອອກແລະການນຳເຂົ້າ) ປີ1989), Recycling and Waste Reduction Act 2020* and the *Product Emissions Standards Act 2017 (ປະມວນກົດໝາຍວ່າດ້ວຍການລີໄຊເຄີນແລະການຫຼຸດຜ່ອນສິ່ງເສດເຫຼືອ ປີ2020* ແລະ *ກົດໝາຍວ່າດ້ວຍມາດຕະຖານການປ່ອຍມົນລະພິດຜະລິດຕະພັນ ປີ2017)*
- ກະຊວງພື້ນຖານໂຄງລ່າງ, ການຂົນສົ່ງ, ການພັດທະນາພາກພື້ນ, ການສື່ສານ, ກິລາ ແລະສິລະປະ, ເພື່ອຈຸດປະສົງຂອງປະມວນກົດໝາຍຕ່າງໆ ເຊັ່ນ: *Road Vehicle Standards Act 2018 (ກົດໝາຍວ່າດ້ວຍມາດຕະຖານຍານພາຫະນະ ບົນທ້ອງຖະໜົນ ປີ 2018).*
- ຄະນະກຳມາທິການ ການເລືອກຕັ້ງຂອງອອສເຕຣເລັຍ, ເພື່ອຈຸດປະສົງຂອງ *Commonwealth Electoral Act 1918 (ປະມວນກົດໝາຍວ່າດ້ວຍການເລືອກຕັ້ງແຫ່ງເຄືອຈັກກະພົບ ປີ 1918)*
- ຫ້ອງການສະຖິຕິອອສເຕຣເລັຍ, ເພື່ອຊັບສິນຂໍ້ມູນລະດັບບຸກຄົນທີ່ລວມເຂົ້າກັນ ແລະ ສະຖິຕິກ່ຽວກັບການເດີນທາງລະຫວ່າງປະເທດທີ່ເຂົ້າມາແລະອອກຈາກອອສເຕຣເລັຍ
- ກະຊວງອຸດສາຫະກຳ, ວິທະຍາສາດແລະຊັບພະຍາກອນ, ເພື່ອຈຸດປະສົງຂອງໂຄງການສຳປະທານອຸດສາຫະກຳ
- ໜ່ວຍງານຢາປາບສັດຕູພືດ ແລະ ຢາສຳລັບສັດຕະວະແພດແຫ່ງອອສເຕຣເລັຍ, ເພື່ອຈຸດປະສົງຂອງ *Agricultural and Veterinary Chemicals (Administration) Act 1992 (ປະມວນ ກົດໝາຍວ່າດ້ວຍສານເຄມີການກະສິກຳ ແລະ ສັດຕະວະແພດ (ການບໍລິຫານ) ປີ1992)*
- ຄະນະກຳມາທິການ ການຄ້າ ແລະ ການລົງທຶນ ແຫ່ງ ອອສເຕຣເລັຍ (Austrade), ສຳລັບຈຸດປະສົງທາງດ້ານກົດໝາຍ ເຊັ່ນ *Australian Trade and Investment Commission Act 1985 (ກົດໝາຍວ່າດ້ວຍຄະນະກຳມາທິການ ການຄ້າ ແລະ ການລົງທຶນ ແຫ່ງ ອອສເຕຣເລັຍ ປີ 1985)* ແລະ ສຳລັບຈຸດປະສົງທີ່ກ່ຽວຂ້ອງກັບການຄ້າລະຫວ່າງປະເທດ ແລະ ຕ່ອງໂສ້ການສະໜອງ

**ການເປີດເຜີຍສຳລັບກິດຈະກຳທີ່ກ່ຽວຂ້ອງກັບການບັງຄັບໃຊ້**

ພວກເຮົາເປີດເຜີຍຂໍ້ມູນສ່ວນຕົວໃຫ້ອອສເຕຣເລັຍ (ລັດຖະບານ ອອສເຕຣເລັຍ, ຣັດ ແລະ ອານາເຂດ) ແລະອົງການບັງຄັບໃຊ້ຕ່າງປະເທດ ຫຼືອົງການບັງຄັບໃຊ້ທີ່ມີຄວາມຈຳເປັນຢ່າງສົມເຫດສົມຜົນສຳລັບກິດຈະກຳທີ່ກ່ຽວຂ້ອງກັບການບັງຄັບໃຊ້ທີ່ດຳເນີນໂດຍ ຫຼືໃນນາມຂອງອົງການບັງຄັບໃຊ້ພາຍໃນ, ລວມທັງການປ້ອງກັນ, ການກວດຈັບ, ການສືບສວນ ແລະດຳເນີນຄະດີ ຫຼື ການລົງໂທດຂອງການກະທຳຜິດທາງອາຍາ. ກິດຈະກຳທີ່ກ່ຽວຂ້ອງກັບການບັງຄັບໃຊ້ຍັງ ລວມເຖິງການຊ່ວຍເຫຼືອການກະກຽມ ຫຼື ການດຳເນີນຂະບວນການພິຈາລະນາຄະດີ ຕໍ່ໜ້າສານຫຼືສານອຸທອນໃດໆ (ລວມທັງການພິຈາລະນາຄະດີ ຊັນນະສູດສົບ).

**ການເປີດເຜີຍຕໍ່ໜ່ວຍງານກົດໝາຍ ແລະ ຜູ້ດຳລົງຕຳແໜ່ງ**

ພວກເຮົາເປີດເຜີຍຂໍ້ມູນສ່ວນຕົວຕໍ່ອົງການ ເຊັ່ນ:

- ຜູ້ກວດກາ ຂອງ ເຄືອຈັກກະພົບ
- ຫ້ອງການຄະນະກຳມາທິການ ຂໍ້ມູນຂ່າວສານອອສເຕຣເລັຍ
- ຫ້ອງການກວດສອບແຫ່ງຊາດອອສເຕຣເລັຍ
- ຄະນະກຳມະການສິດທິມະນຸດອອສເຕຣເລັຍ
- ຜູ້ກວດກາຄວາມຍຸຕິທຳຂອງວຽກງານ
- ໂຄງການແນະນຳສານເຄມີອຸດສາຫະກຳຂອງ ອອສເຕຣເລັຍ

**ການເປີດເຜີຍກ່ຽວກັບສຸຂະພາບ ແລະຄວາມປອດໄພ**

ຂໍ້ມູນສ່ວນຕົວຂອງທ່ານອາດຈະຖືກເອົາໃຫ້ອົງການສາທາລະນະສຸກ ຂອງລັດຖະບານ ແລະ ຜູ້ໃຫ້ບໍລິການທາງການແພດທີ່ກ່ຽວຂ້ອງກັບການພິຈາລະນາວີຊ່າ ແລະການຈັດການຄວາມສ່ຽງດ້ານສາທາລະນະສຸກ.

ຂໍ້ມູນສ່ວນຕົວຂອງທ່ານອາດຈະຖືກມອບໃຫ້  ໜ່ວຍງານບັງຄັບໃຊ້ກົດໝາຍຂອງອອສເຕຣເລັຍ ຫຼື ການບໍລິການສຸກເສີນ ເຊິ່ງການເປີດ ເຜີຍຂໍ້ມູນນີ້ແມ່ນມີຄວາມຈຳເປັນເພື່ອຫຼຸດຜ່ອນ ຫຼື ປ້ອງກັນໄພຂົ່ມຂູ່ຮ້າຍແຮງຕໍ່ຊີວິດ, ສຸຂະ ພາບ ຫຼື ຄວາມປອດໄພຂອງບຸກຄົນ ຫຼື ສຸຂະ ພາບ ຫຼື ຄວາມປອດໄພຂອງສາທາລະນະຊົນ.

**ການເປີດເຜີຍ - ອື່ນໆ**

ໂດຍທົ່ວໄປແລ້ວ ກະຊວງອາດຈະເປີດເຜີຍຂໍ້ມູນສ່ວນຕົວໃຫ້ກັບອົງການຈັດຕັ້ງຕ່າງໆ ຕາມກົດໝາຍວ່າດ້ວຍຄວາມເປັນສ່ວນຕົວ, ລວມທັງ:

- ໜ່ວຍງານ ແລະ ອົງກອນດ້ານການສຶກສາ ແລະ ການຈ້າງງານ ທີ່ກ່ຽວຂ້ອງກັບການດຳເນີນການຝຶກອົບຮົມ ຫຼື ການສຶກສາໃນອອສເຕຣເລັຍ
- ນາຍຈ້າງ ຫຼື ຜູ້ສະໜອງແຮງງານກ່ຽວກັບສະຖານະການຍ້າຍຖິ່ນຖານ, ສິດໃນການເຮັດວຽກ ແລະວີຊ່າຂອງທ່ານ
- ຜູ້ໃຫ້ບໍລິການທີ່ໄດ້ເຮັດສັນຍາ, ລວມທັງພາຍໃຕ້ໂຄງການການຕັ້ງຖິ່ນຖານດ້ານມະນຸດສະທຳ, ໂຄງການປະຖົມນິເທດວັດທະນະທຳ ອອສເຕຣເລັຍ ແລະ ໂຄງການຜ່ານການຊ່ວຍເຫຼືອ
- ສຳນັກງານຂ້າຫຼວງໃຫຍ່ສຳລັບອົບພະຍົບແຫ່ງສະຫະປະຊາຊາດ
- ສະມາຄົມກາແດງອອສເຕຣເລັຍແລະສາກົນ
- ສະຖານທີ່ກັກກັນຂອງຣັດ ແລະອານາເຂດ ເພື່ອອຳນວຍຄວາມສະດວກໃນການໂອນ ແລະຢືນຢັນສະຖານະຄົນເຂົ້າເມືອງ
- ໜ່ວຍງານ ແລະ ອົງການສະຫວັດດີການເດັກຂອງຣັດ ແລະ ອານາເຂດ
- ສະຖານທູດອື່ນໆ, ສຳນັກງານຂ້າຫຼວງໃຫຍ່ ແລະ ສະຖານກົງສຸນ
- ໜ່ວຍງານ ແລະ ບຸກຄົນທີສາມທີ່ໄດ້ເຮັດສັນຍາ ແລະ ອົງການຄົ້ນຄວ້າເພື່ອຈຸດປະສົງໃນການຄົ້ນຄວ້າ, ການສືບສວນ ແລະ ການວິເຄາະເພື່ອການພັດທະນາ ແລະ/ຫຼື ການປັບປຸງ ນະໂຍບາຍ ແລະ/ຫຼືໂຄງການ
- ບັນດາໜ່ວຍງານ, ອົງການຈັດຕັ້ງ ແລະ ອົງການຈັດຕັ້ງສາກົນຂອງລັດຖະບານອອສເຕຣເລັຍ ທີ່ມີບົດບາດໃນການປະສານງານໃນກິດຈະກຳສາກົນທີ່ສຳຄັນຕ່າງໆ ເຊັ່ນ ການແຂ່ງຂັນກິລາທີ່ສຳຄັນ ແລະ ກອງປະຊຸມສາກົນຂອງປະມຸກລັດ, ສະມາຊິກສະພາຂອງ ລັດຖະບານກາງ, ລັດຖະບານ ຣັດ, ອານາເຂດ
- ເທສບານລັດຖະບານທ້ອງຖິ່ນ, ອົງການຈັດຕັ້ງແລະເຈົ້າໜ້າທີ່ລັດຖະບານທີ່ມີບົດບາດໃນດ້ານການເປັນພົນລະເມືອງ, ລາງວັນທີ່ ແລະ ກິດຈະກຳທີ່ກ່ຽວຂ້ອງ ແລະ ການຕ້ອນຮັບພົນລະເມືອງໃໝ່ຢ່າງເປັນທາງການ
- ສະມາຊິກໃນພາກອຸດສາຫະກຳ ເພື່ອຈຸດປະສົງໃນການປ້ອງກັນ ຫຼື ແກ້ໄຂບັນຫາການນຳເຂົ້າສິນຄ້າຜິດກົດໝາຍເຂົ້າມາໃນປະເທດອອສເຕຣເລັຍ
- ສຳນັກງານບໍລິການຈັດການພາວະສຸກເສີນແຫ່ງຊາດ.


© COMMONWEALTH OF AUSTRALIA, 2026

## ການເປີດເຜີຍຂໍ້ມູນໃນບັນດາທະບຽນສາທາລະນະ

ກະຊວງມີທະບຽນຂໍ້ມູນສາທາລະນະຫຼາຍສະບັບ, ເຊິ່ງອາດລວມມີຂໍ້ມູນສ່ວນຕົວດ້ວຍ. ທະບຽນເຫຼົ່ານີ້ລວມມີ ແຕ່ບໍ່ຈຳກັດພຽງ:

- ທະບຽນຜູ້ສະໜັບສະໜູນທີ່ໄດ້ຮັບການອະນຸມັດ
- ທະບຽນນາຍຈ້າງທີ່ຕ້ອງຫ້າມ
- ທະບຽນຕົວແທນດ້ານການຍ້າຍຖິ່ນຖານ
- ທະບຽນຂໍ້ສັນຍາແຮງງານ
- ທະບຽນຂອງຂວັນ ແລະ ຜົນປະໂຫຍດຕ່າງໆ
- ບັນທຶກການເປີດເຜີຍຂໍ້ມູນຕາມກົດໝາຍວ່າດ້ວຍເສລີພາບໃນການເຂົ້າເຖິງຂໍ້ມູນຂ່າວສານ (FOI)

## ການເປີດເຜີຍຕໍ່ຜູ້ຮັບຢູ່ຕ່າງປະເທດ

ເນື່ອງຈາກລັກສະນະຂອງໜ້າທີ່ແລະກິດຈະກຳຂອງຕົນ, ກະຊວງອາດຈະເປີດເຜີຍຂໍ້ມູນສ່ວນບຸກຄົນໃຫ້ກັບຜູ້ຮັບຢູ່ຕ່າງປະເທດ.

ໃນກໍລະນີສ່ວນໃຫຍ່, ມັນຈະເປັນການເປີດເຜີຍຕໍ່ເຈົ້າໜ້າທີ່ໃນ/ຈາກປະເທດຕົ້ນທາງຫຼືຖິ່ນທີ່ຢູ່ອາໄສປົກກະຕິຂອງທ່ານ (ເວັ້ນເສັຍແຕ່ວ່າທ່ານໄດ້ຮຽກຮ້ອງຄວາມຄຸ້ມຄອງໃຫ້ພົ້ນຈາກປະເທດ ເຫຼົ່ານັ້ນ ແລະກຳລັງລໍຖ້າຜົນຂອງການປະເມີນຂອງການຮຽກຮ້ອງນັ້ນຢູ່). ກະຊວງຍັງຈະເປີດເຜີຍຂໍ້ມູນສ່ວນຕົວໃຫ້ກັບປະເທດ ຫຼື ອົງການຈັດຕັ້ງທີ່ມີຂໍ້ຕົກລົງກັບອອສເຕຣເລັຍ. ປະເທດເຫຼົ່ານີ້ລວມມີ ແຕ່ບໍ່ຈຳກັດພຽງ ສະຫະຣາດຊະອານາຈັກ, ນິວຊີແລນດ໌, ການາດາແລະສະຫະຣັດ ອະເມຣິກາ, ເຊັ່ນດຽວກັນກັບອົງການຈັດຕັ້ງສາກົນທີ່ມີລາຍຊື່ຂ້າງເທິງພາຍໃຕ້ 'ການເປີດເຜີຍ - ອື່ນໆ'.

***ໜ້າທຳອິດ ສາຍສອບຖາມ ທົ່ວໄປ***

**www.homeaffairs.gov.au**

ທ່ານສາມາດຕິດຕໍ່ຫາ Global Service Centre (GSC) (ສູນບໍລິການທົ່ວໂລກ (GSC)) ຂອງພວກເຮົາ ຈາກ ວັນຈັນເຖິງວັນສຸກ 9 ໂມງເຊົ້າຫາ 5 ໂມງແລງ ຕາມເວລາທ້ອງຖິ່ນຂອງທ່ານ. GSC ຂອງພວກເຮົາປິດໃນວັນພັກຣາຊການແຫ່ງຊາດຂອງອອສເຕຣເລັຍ.

**ພາຍໃນອອສເຕຣເລັຍ ໂທລະສັບ ໝາຍເລກ** 131 881

**ນອກ ອອສເຕຣເລັຍ ໂທລະສັບ ໝາຍເລກ** +61 2 6196 0196

© COMMONWEALTH OF AUSTRALIA, 2026